# ທ່ຽວຊົມມໍລະດົກໂລກຢູ່ແຂວງຢຸນນານ



ວັນທີ 19 ພະຈິກນີ້, ແຂວງຢຸນນານ ໄດ້ຮ່ວມກັບແຂວງຝູຈ້ຽນ ແລະ ແຂວງຊານຕົງຂອງຈີນ, ນະຄອນຂອນແກ່ນຂອງໄທ, ແຂວງຫຼວງພະບາງຂອງລາວ ແລະ ແຂວງຊຽມຣຽບຂອງກຳປູເຈຍ, ໄດ້ຮ່ວມກັນເຜີຍແຜ່ "ແຜນການທ່ຽວຊົມມໍລະດົກໂລກ" ຢູ່ນະຄອນຄຸນໝິງ ໂດຍສະເໜີໃຫ້ສ້າງເວທີການຮ່ວມມືສາກົນ ທີ່ມີຫຼາຍຝ່າຍເຂົ້າຮ່ວມ, ເຕົ້າໂຮມກຳລັງວິຊາການໃນຂົງເຂດການທ່ອງທ່ຽວວັດທະນະທຳ, ຕົວເມືອງມິດຕະພາບ, ສື່ມວນຊົນ, ວົງການວິຊາການ ແລະ ວິສາຫະກິດ, ຮ່ວມກັນຊຸກຍູ້ການປົກປ້ອງ ແລະ ນຳໃຊ້ມໍລະດົກໂລກ, ຈັດຕັ້ງປະຕິບັດຂໍ້ລິເລີ່ມວ່າດ້ວຍອະລິຍະທຳທົ່ວໂລກ ດ້ວຍການກະທຳຕົວຈິງ ແລະ ຊຸກຍູ້ການສ້າງປະຊາຄົມຮ່ວມຊາຕາກຳຂອງມວນມະນຸດ. ແຂວງຢຸນນານ ມີມໍລະດົກໂລກ 6 ແຫ່ງ ເຊິ່ງໄດ້ກາຍເປັນຂົວແຫ່ງການແລກປ່ຽນ ລະຫວ່າງ ແຂວງຢຸນນານກັບໂລກ. ໃນພາກນີ້, ພວກເຮົາ ມາຮ່ວມກັນຟັງເລື່ອງລາວ ລະຫວ່າງ ບຸກຄົນມິດຕະພາບຕ່າງປະເທດ ກັບມໍລະດົກຂອງແຂວງຢຸນນານ ເພື່ອຮັບຮູ້ເຖິງຄວາມມ່ວນຊື່ນໃນການທ່ຽວຊົມມໍລະດົກໂລກ.

## ຫວັງວ່າ ຈະສາມາດໄປທ່ຽວຊົມມໍລະດົກໂລກຫຼາຍກວ່າເກົ່າ

ບ້ານເກີດຂອງ ຜູ້ນຳທ່ຽວລາວ ທ້າວ ສຸລິເດດ ຢູ່ນະຄອນ-ຫຼວງພະບາງ ເຊິ່ງເປັນເປັນຕົວເມືອງທ່ອງທ່ຽວທີ່ມີຊື່ສຽງຂອງລາວ ແລະ ກໍແມ່ນເມືອງມໍລະດົກທຳມະຊາດ ແລະ ວັດທະນະທຳຂອງໂລກ. ທ້າວ ສຸລິເດດ ກ່າວວ່າ: ນອກຈາກທິວທັດທຳມະຊາດ ແລະ ເມືອງບູຮານແລ້ວ, ເຄື່ອງຫັດຖະກຳທີ່ມີເອກະລັກພິເສດ ຂອງນະຄອນ-ຫຼວງພະບາງ ກໍໄດ້ຮັບຄວາມນິຍົມຊົມຊອບຈາກນັກທ່ອງທ່ຽວຫຼາຍ, ໃນນັ້ນ, ນັກທ່ອງທ່ຽວຈີນ ມັກມາເລືອກຊື້ສິ້ນລາວຢູ່ແຫ່ງນີ້.

ທ້າວ ສຸລິເດດ ກ່າວຕື່ມວ່າ: ໃນຊຸມປີຜ່ານມາ, ການທ່ຽວຊົມມໍລະດົກໂລກ ໄດ້ຮັບຄວາມນິຍົມຫຼາຍຂຶ້ນ ແລະ ໄດ້ຊຸກຍູ້ການພັດທະນາຂອງຂະແໜງການທ່ອງທ່ຽວຂອງລາວ ເຊິ່ງໄດ້ດຶງດູດນັກທ່ອງທ່ຽວມາທ່ຽວ ນະຄອນ-ຫຼວງພະບາງ ນັບມື້ນັບຫຼາຍຂຶ້ນ. ພ້ອມກັນນັ້ນ, ທ້າວ ສຸລິເດດ ກໍມັກພານັກທ່ອງທ່ຽວລາວ ມາທ່ຽວແຂວງຢຸນນານຂອງຈີນ ແລະ ກໍມີຄວາມຮັບຮູ້ໃໝ່ອ່ຽມຕໍ່ແຂວງຢຸນນານ.

ທາງລົດໄຟ ລາວ-ຈີນ ກໍໄດ້ນຳເອົາການປ່ຽນແປງໃໝ່ມາໃຫ້ວຽກງານຂອງທ້າວ ສຸລິເດດ. ພາຍຫຼັງໄດ້ເປີດນຳໃຊ້ທາງລົດໄຟ ລາວ-ຈີນແລ້ວ, ທ້າວ ສຸລິເດດ ໄດ້ໄປແລກປ່ຽນບົດຮຽນ ຢູ່ຈີນຫຼາຍເທື່ອ ໂດຍໄດ້ຮັບຮູ້ເຖິງຄວາມກະຕືລືລົ້ນຕໍ່ການທ່ອງທ່ຽວຂອງປະຊາຊົນສອງຊາດ ລາວ-ຈີນ. ເທື່ອນີ້, ມາເຂົ້າຮ່ວມພິທີເຜີຍແຜ່ "ແຜນການທ່ຽວຊົມມໍລະດົກໂລກ" ຢູ່ນະຄອນຄຸນໝິງ, ທ້າວ ສຸລິເດດ ໄດ້ຮັບຂອງຂວັນຈາກຜູ້ນຳທ່ຽວແຂວງຢຸນນານ ສະບັບໜຶ່ງ ຄື: ບົດປະພັນທີ່ຂຽນດ້ວຍຕົວໜັງສືຕົງປາ.

ຕົວໜັງສືຕົງປາ ເປັນຕົວໜັງສືທີ່ບູຮານເກົ່າແກ່ຂອງເຜົ່ານາຊີຂອງຈີນ ແລະ ຖືກເອີ້ນວ່າເປັນ "ຕົວໜັງສືທີ່ແຕ້ມຕາມຮູບທີ່ຍັງໃຊ້ໄດ້ ໃນປັດຈຸບັນພຽງໜຶ່ງດຽວໃນໂລກ". ສ່ວນເມືອງເກົ່າລີ້ຈ່ຽງ ທີ່ເປັນຈຸດຕັ້ງຖິ່ນຖານຂອງເຜົ່ານາຊີ ຖືກຈັດເຂົ້າໃນບັນຊີມໍລະດົກວັດທະນະທຳໂລກ ໃນປີ 1997. ປັດຈຸບັນ, ເມືອງເກົ່າ ທີ່ມີປະຫວັດສາດ 800 ກວ່າປີແຫ່ງນີ້ ໄດ້ກາຍເປັນຈຸດໝາຍປາຍທາງການທ່ອງທ່ຽວ ທີ່ມີຊື່ສຽງລະດັບສາກົນ. ທ້າວ ສຸລິເດດ ຫວັງຢ່າງຍິ່ງວ່າ: ຈະສາມາດທ່ຽວຊົມມໍລະດົກໂລກ ກັບ ໝູ່ເພື່ອນຢຸນນານຫຼາຍກວ່າເກົ່າ.

ເດືອນກັນຍາ 2024, ແຂວງຊຽງຂວາງຂອງລາວ ແລະ ນະຄອນຈ່າວທົ່ງຂອງແຂວງຢຸນນານຈີນ, ໄດ້ສ້າງເປັນເມືອງແຮກສ່ຽວຢ່າງເປັນທາງການ. ທ່ານ ສີວິໄລ ແສງຈະເລີນ ຮອງເຈົ້າແຂວງຊຽງຂວາງ ປະທານຄະນະກຳມະການ ກ່າວວ່າ: ການເຜີຍແຜ່ "ແຜນການທ່ຽວຊົມມໍລະດົກໂລກ" ຈະເຮັດໃຫ້ມໍລະດົກໂລກຂອງແຂວງຢຸນນານ ແລະ ລາວມີການພົວພັນກັນຢ່າງແໜ້ນແຟ້ນ ເຊິ່ງຈະສ້າງອະນາຄົດໃໝ່ອ່ຽມ ໃຫ້ແກ່ການພັດທະນາການທ່ອງທ່ຽວ ວັດທະນະທຳຂອງສອງຝ່າຍ.

## ພູຈິງມ້າຍຊານ ເຮັດໃຫ້ຄົນຮູ້ສຶກປະທັບໃຈຫຼາຍ

ຫວ່າງມໍ່ໆມານີ້, ນາງ ເຜີງສຽວຜິງ ນັກສຶກສາກຳປູເຈຍທີ່ມາຮຽນຕໍ່ຢູ່ຈີນ ໄດ້ເຂົ້າຮ່ວມກິດຈະກຳ "ຮັບຮູ້ຈີນ, ເດີນທາງເຂົ້າສູ່ນະຄອນຜູເອີ" ໂດຍໄດ້ເດີນທາງໄປເຖິງພູຈິງມ້າຍຊານຂອງເມືອງປົກຄອງຕົນເອງເຜົ່າລາຫູ ລ້ານຊ້າງ ນະຄອນຜູເອີ ພ້ອມນັກສຶກສາທີ່ມາຈາກປະເທດຕ່າງໆ ເພື່ອຮັບຮູ້ວັດທະນະທຳຊາຂອງຈີນ, ຮັບຮູ້ຂັ້ນຕອນ ແລະ ສີມືຜະລິດຊາຕ່າງໆເຊັ່ນ: ເດັດໃບຊາ, ຂົ້ວຊາ ແລະ ອັດກ້ອນຊາເປັນຕົ້ນ. ນາງ ກ່າວວ່າ: ໃນກິດຈະກຳດັ່ງກ່າວ, ຂ້າພະເຈົ້າໄດ້ຮູ້ຈັກກັບເພື່ອນມິດຫຼາຍຄົນທີ່ມາຈາກປະເທດຕ່າງໆ, ໄດ້ຮຽນຮູ້ຄວາມຮູ້ຫຼາຍຢ່າງກ່ຽວກັບຊາ, ຂ້າພະເຈົ້າຮູ້ສຶກດີໃຈທີ່ສຸດ.

ວັນທີ 17 ກັນຍາ 2023, "ທິວທັດວັດທະນະທຳປ່າຕົ້ນຊາບູຮານພູຈິງມ້າຍຊານຜູເອີ" ຖືກຈັດເຂົ້າໃນ "ບັນຊີລາຍຊື່ມໍລະດົກໂລກ" ຢ່າງເປັນທາງການ ເຊິ່ງໄດ້ກາຍເປັນມໍລະດົກໂລກແຫ່ງທີ 57 ຂອງຈີນ. ຢູ່ຕາມພູຈິງມ້າຍຊານ ທີ່ເກົ່າແກ່ບູຮານ, ທຸກບ້ານໄດ້ປູກຊາ, ທຸກຄອບຄົວໄດ້ຜະລິດຊາ, ທຸກຄົນກິນນ້ຳຊາ ແລະ ຕ້ອນຮັບແຂກດ້ວຍນ້ຳຊາ ເຊິ່ງໄດ້ກາຍເປັນທິວທັດວັດທະນະທຳທີ່ຄົນ, ຊາ ແລະ ປ່າໄມ້ ຢູ່ຮ່ວມກັນຢ່າງກົມກຽວກັນ, ພູຈິງມ້າຍຊານ ທີ່ເຕັມໄປດ້ວຍປັດໄຈສີຂຽວ, ມີຄວາມກົມກຽວກັນ, ມີຫຼາກຫຼາຍສີສັນ ແລະ ກວມລວມໄດ້ສ້າງພາກປະທັບໃຈອັນເລິກເຊິ່ງໃຫ້ແກ່ ນາງ ເຜີງສຽວຜິງ.

ນາງ ເຜີງສຽວຜິງ ກ່າວວ່າ: ຂ້າພະເຈົ້າ ມັກແລກປ່ຽນກັບຄົນທີ່ມີວັດທະນະທຳທີ່ຕ່າງກັນ ແລະ ຫວັງວ່າຈະສາມາດເປີດກວ້າງສາຍຕາຂອງຕົນ ແລະ ຍົກຄວາມສາມາດຂອງຕົນ ໂດຍຜ່ານຈາກການເຂົ້າຮ່ວມກິດຈະກຳຕ່າງໆ. ນາງກ່າວຕື່ມວ່າ: ແຂວງຢຸນນານ ບໍ່ພຽງແຕ່ມີວັດທະນະທຳທີ່ອຸດົມສົມບູນ ແລະ ຫຼາກຫຼາຍສີສັນເທົ່ານັ້ນ, ແຕ່ຍັງມີສະພາບອາກາດທີ່ດີ ແລະ ທິວທັດທຳມະຊາດທີ່ສວຍງາມ ເຊິ່ງເປັນຈຸດໝາຍປາຍທາງການທ່ອງທ່ຽວທີ່ໄດ້ຮັບຄວາມນິຍົມ ຈາກນັກທ່ອງທ່ຽວ.

ກຳປູເຈຍ ມີມໍລະດົກໂລກຫຼາຍແຫ່ງ ເຊັ່ນ: ອັງກໍວັດ, ຜາສາດພະວິຫານ, ບູຮານນະສະຖານຊຳບໍເປຣກູກ ແລະ ບູຮານນະສະຖານເກາະແກ. ນັບແຕ່ປີ 2006 ເປັນຕົ້ນມາ, ແຂວງຊຽມຣຽບ ທີ່ມີອັງກໍວັດ ແລະ ແຂວງຢຸນນານ ໄດ້ສ້າງເປັນເມືອງແຮກສ່ຽວຢ່າງເປັນທາງການ. ໃນພິທີເຜີຍແຜ່ "ແຜນການທ່ຽວຊົມມໍລະດົກໂລກ", ທ່ານ ຢຸນລິນ ຮອງເຈົ້າແຂວງຊຽມຣຽບກ່າວວ່າ: ປີຜ່ານມາ, ສະໜາມບິນສາກົນ ອັງກໍຊຽມຣຽບ ໄດ້ເປີດນຳໃຊ້ຢ່າງເປັນທາງການ ເຊິ່ງເຮັດໃຫ້ນັກທ່ອງທ່ຽວສາກົນສາມາດເດີນທາງໄປເຖິງອັງກໍວັດ ທີ່ເປັນມໍລະດົກໂລກ ໄດ້ຢ່າງສະດວກວ່ອງໄວກວ່າເກົ່າ. ຄຽງຄູ່ກັບການປະຕິບັດ "ແຜນການທ່ຽວຊົມມໍລະດົກໂລກ", ທ່ານ ຢຸນລິນ ຄອງຄອຍໃຫ້ນັກທ່ອງທ່ຽວທັງຫຼາຍ ສາມາດເດີນທາງໄປທ່ຽວແຂວງຢຸນນານ ແລະ ແຂວງຊຽມຣຽບ ນັບມື້ນັບຫຼາຍຂຶ້ນ ເພື່ອຮັບຮູ້ເຖິງທິວທັດທຳມະຊາດທີ່ສວຍງາມ ແລະ ປະຫວັດສາດທີ່ເກົ່າແກ່ຂອງສອງແຂວງດັ່ງກ່າວ.















### ເນື້ອໃນເພີ່ມເຕີມ:

ແຂວງຢຸນນານ ມີມໍລະດົກໂລກ 6 ແຫ່ງ ເຊິ່ງເປັນອັນດັບທີ 2 ຂອງຈີນ, ຕ່າງແມ່ນ ເມືອງເກົ່າລີ້ຈ່ຽງ, ເຂດອະນຸລັກແມ່ນ້ຳສາມສາຍ ໄຫຼຕາມທິດດຽວກັນ, ປ່າຫີນ, ເຂດຊາກຫີນເສິງຈ່ຽງ, ທິວທັດວັດທະນະທຳນາຂັ້ນໄດຮານີ ຫົງເຫີ ແລະ ທິວທັດວັດທະນະທຳປ່າຕົ້ນຊາບູຮານພູຈິງມ້າຍຊານຜູເອີ.

ແຫຼ່ງຂ່າວ: ໜັງສືພິມລາຍວັນຢຸນນານ, ເວັບໄຊຊິນຮວາ ແລະ ອື່ນໆ

(ສະໜອງຂໍ້ມູນໂດຍ: ສູນການສື່ສານສາກົນພາກພື້ນອາຊີໃຕ້-ອາຊີຕາເວັນອອກສ່ຽງໃຕ້ແຂວງຢຸນນານ)

ynzhanba@163.com
laos.yunnangateway.com